CalEPA
California Environmental
Protection Agency

**Edmund G. Brown Jr.**
*Governor*

**Matthew Rodriquez**
*Secretary for Environmental Protection*

**ເພື່ອການສົ່ງອອກທັນທີ**
ວັນທີ 20 ພຶສຈິກາ ປີ 2014

**ຕິດຕໍ່**
ທ່ານ ປອລ ແພນ (Paul Penn)
ໂທຣະສັບ (916) 327-9558
ອີແມວ Paul.Penn@calepa.ca.gov

# ກັມມະການພິເສດຮ່ວມຈາກພະແນກການຕ່າງໆເພື່ອຄົ້ນຄົ້ວການຕົ້ມນໍ້າມັນຊຶ່ງເປັນເຈົ້າພາບຂອງກອງປະຊຸມເພື່ອຄວາມປອດພັຍໃນພາກເນືອຣັດຄາລິຟໍເນັຽ

ເມືອງຣິສມອນ, ຄາລິຟໍເນັຽ. – ຄະນະກັມມະການຮ່ວມພິເສດຈາກພະແນກການຕ່າງໆເພື່ອຄົ້ນຄົ້ວການຕົ້ມນໍ້າມັນຊຶ່ງຈະເປັນເຈົ້າພາບຂອງກອງປະຊຸມຂອງຄວາມປອດພັຍໃນວັນທີ 11 ທັນວາໃນເມືອງຣິສມອນ.ອັນນີ້ແມ່ນກອງປະຊຸມທີ່ທໍາອິດທີ່ຈະຈັດຂຶ້ນໃນຫລາຍບອນຄືເປັນການໃຫ້ລາຍລະອຽດຕ່າງໆແລະເປັນການໂຄສະນາສັກສວນໃນການເວົ້າລົມກັນກ່ຽວກັບຄວາມປອດພັຍຂອງຄົນງານແລະປະຊາຄົມນັ້ນ.ພາຍໃນສອງຊົ່ວໂມງກອງປະຊຸມນີ້ຊຶ່ງຈະເປັນໂອກາດທີ່ຈະໃຫ້ມວນຊົນໄດ້ເກັບກໍາຫລັກຖານແລະຮູ້ຈັກລາຍລະອຽດຂອງເຣື່ອງພາຍໃນ. ຈະມີນາຍແປພາສາຕ້ຽມພ້ອມເພື່ອຄວາມສະດວກໃນພາສາສະເປນນິດ ແລະ ພາສາລາວນໍາດ້ວຍ.

ເວລາໃດ: ວັນພະຫັດ, ວັນທີ 11 ປີ 2014 ເວລາ 6 – 8 ໂມງແລງ
ຢູ່ໃສ: ຫ້ອງປະຊຸມຂອງສະພາເມືອງຣິສມອນ
440 ຖນົນ Civic Center Plaza,ເມືອງຣິສມອນ,ຄາລິຟໍເນັຽ 94804
ແມ່ນໃຜ: ອົງການຈັດຕັ້ງການປະກອບສ່ວນແລະການວາງແຜນຊຶ່ງຮ່ວມກັນໂດຍມີເຈົ້າຫນ້າຖ້ອງຖິ່ນ,ຣັດ ແລະທາງຣັຖບານກາງ; ພວກສະມາຄົມຂອງກັມມະກອນແລະພວກຮັບເຫມົາວຽກ; ພວກບໍຣິສັດຕົ້ມນໍ້າມັນ; ພວກນັກຊ້ຽວຊານວິຊາການ; ແລະ ພວກປະຊາຄົ ແລະ ພວກກຸມຄະນະນັກສິ່ງແວດລ້ອມ.
ຫົວເຣື່ອງ:
- ຣະບົບການເຕືອນແລະລາຍງານການສຸກເສີນ
- ຣະບົບການຄວບຄຸມເບິ່ງແຍງອາກາດ
- ການຂົນສົ່ງຂອງນໍ້າມັນເຊື້ອງເຜິ້ງໂດຍທາງລົດໄຟ ແລະ ວິທີອື່ນໆ

ຍັງຈະມີກອງປະຊຸມຂອງຄວາມປອດພັຍນີ້ທີ່ກໍາລັງກະຕ້ຽມເພື່ອຈະຈັດຂຶ້ນຢູ່ໃນຫລາຍບອນໃນຫົວເຣື່ອງອັນດຽວກັນນີ້ໃນພາກເນື້ອຂອງຣັດຄາລິຟໍເນັຽແລະໃນເຂດອື່ນໃນຣັດທີ່ມີບໍຣິສັດຕົ້ມນໍ້າມັນຢູ່ໃນນັ້ນ.

ພວກກັມມະການພິເສດຮ່ວມຈາກພະແນກການຕ່າງໆເພື່ອຄົ້ນຄົ້ວການຕົ້ມນໍ້າມັນ ເຣັດວຽກປະສານງານເພື່ອຄວາມສໍາເຣັດໃນຄວາມປອດພັຍໃນຣະດັບສູງສໍາລັບຄົນງານໃນບໍຣິສັດຕົ້ມນໍ້າມັນແລະປະຊາຄົມໃນຖ້ອງຖິ່ນເພື່ອປ້ອງກັນອຸບັດເຫດແລະການກະຕ້ຽມທີ່ໄດ້ຜົນໃນການຕອບສະນອງການສຸກເສີນ. ຊຶ່ງເປັນການຕິດຕາມກັບໄຟໄຫມ້ບໍຣິສັດຕົ້ມນໍ້າມັນຂອງເຊບຣອນທີ່ເມືອງຣິສມອນໃນເດືອນສິງຫາປີ2012, ທ່ານເຈົ້າແຂວງຣັດ Edmund G. Brown Jr ໄດ້ຄໍາສັ່ງໃຫ້ພະແນກປ້ອງກັນສິ່ງແວດລ້ອມ(CalEPA )ຈັດຕັ້ງກັມມະການພິເສດນີ້ໂດຍມີ 10 ພະແນກການຂອງຣັດ,ກະຊວງປ້ອງກັນສິ່ງແວດລ້ອມຣັຖບານກາງແລະເຈົ້າຫນ້າທີ່ຖ້ອງຖິ່ນທີ່ມີບໍຣິສັດຕົ້ມນໍ້າມັນຢູ່ເຂດນັ້ນ. ຂໍຖາມໃຫ້ຈ້ອງບອນ, ແຕ່ບໍ່ຈໍາເປັນໃຫ້ຕິດຕໍ່ refinery@calepa.ca.gov ຫລືໂທຣະສັບຫາ (916) 327-9558.